ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------000------------


ສະມາຄົມຄົນພິການແຫ່ງຊາດລາວ

ຖະໜົນ: ໂພນສະຫວ່າງ-ໜອງທາ, ບ. ໂພນສະຫວ່າງ, ເມືອງ ຈັນທະບູລີ

ຕູ້ໄປສະນີ: 6751, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທ: (+856 21) 562-963, ແຟັກ: (+856 21 562-964) ເວັບໄຊ:www.ldpa.org.la


ເລກທີ 327 /ສພຊລ

ນະຄອນຫລວງວຽງຈັນ, ວັນທີ......./....../ 2015

04 FEB 2016

# ແຈ້ງການ

ເຖິງ: ປະທານສະມາຄົມຄົນພິການແຫ່ງຊາດລາວສາຂາແຂວງ ແລະ ປະທານສະມາຄົມຄົນພິການປະເພດຕ່າງໆ.

ເລື່ອງ: ແຈ້ງການກ່ຽວກັບປະກາດຮັບສະໝັກບຸກຄົນທີ່ຈະສະໝັກເຂົ້າເປັນຄະນະບໍລິຫານງານສະມາຄົມຄົນພິການແຫ່ງຊາດລາວຊຸດໃໝ່.

- ອີງຕາມ: ຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າການກະຊວງພາຍໃນວ່າດ້ວຍການອະນຸມັດສ້າງຕັ້ງສະມາຄົມຄົນພິການແຫ່ງຊາດລາວ,ສະບັບເລກທີ່ 54/ພນ,ລົງວັນທີ່ 13 ກັນຍາ 2011.
- ອີງຕາມ: ກົດລະບຽບຂອງສະມາຄົມຄົນພິການແຫ່ງຊາດລາວ.ສະບັບລົງວັນທີ່ 13 ກັນຍາ 2011.

ສະມາຄົມຄົນພິການແຫ່ງຊາດລາວ ( ສພຊລ ) ຂໍຖືເປັນກຽດ,ແຈ້ງການມາຍັງ ປະທານສະມາຄົມຄົນພິການສາຂາແຂວງ 12 ແຂວງໃນຂອບເຂດທົ່ວປະເທດ, ປະທານສະມາຄົມຄົນພິການປະເພດຕ່າງໆ, ຫົວໜ້າກຸ່ມ, ຫົວໜ້າໜ່ວຍງານ ແລະ ສະມາຊິກຄົນພິການທຸກສາຂາອາຊີບຊາບວ່າ:

ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່ ແລະ ປັບປຸງໂຄງຮ່າງການຈັດຕັ້ງຂອງຄະນະບໍລິຫານງານສະມາຄົມຄົນພິການແຫ່ງຊາດ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງຍຸກສະໄໝ, ດັ່ງນັ້ນສະມາຄົມຄົນພິການແຫ່ງຊາດລາວຈຶ່ງອອກແຈ້ງການປະກາດຮັບສະໝັກ ຜູ້ທີ່ຈະສະໝັກຮັບເລືອກຕັ້ງເຂົ້າເປັນຄະນະບໍລິຫານງານ ສະມາຄົມຄົນພິການແຫ່ງຊາດລາວຊຸດໃໝ່ ເຊິ່ງຕ້ອງມີມາດຖານ ແລະ ເງື່ອນໄຂ ທີ່ທາງສະມາຄົມຄົນພິການກຳນົດໄວ້ໃຫ້. ເລີ່ມຮັບສະໝັກແຕ່ມື້ແຈ້ງການເປັນຕົ້ນໄປ ເອກະສານທີ່ຈະປະກອບສະໝັກຕ້ອງປະກອບມີດັ່ງນີ້

1. ຊີວະປະຫວັດຫຍໍ້. ( ສະມາຄົມເປັນຜູ້ກຳນົດ )
2. ໃບຄຳຮ້ອງຂໍສະໝັກເຂົ້າເປັນຄະນະບໍລິຫານງານ ( ສະມາຄົມເປັນຜູ້ກຳນົດ )
3. ໃບແຈ້ງໂທດ ເລກ 3 ( ບໍ່ໃຫ້ກາຍສາມເດືອນ )
4. ໃບກວດສຸຂະພາບ ( ຢັ້ງຢືນຈາກໂຮງໝໍໃດໜຶ່ງ )
5. ໃບຢັ້ງຢືນທີ່ຢູ່
6. ປຶ້ມສຳມະໂນຄົວ ແລະ ບັດປະຈຳຕົວ
7. ໃບຮັບປະກັນ
8. ໃບປະກາສະນີຍະບັດ
9. ໃບຢັ້ງຢືນການຜ່ານງານ ( ຖ້າມີຍິ່ງເປັນການດີ )

10. ຮູບ 4 X 6 ຈຳນວນ 4 ໃບ ( ຮູບຖ່າຍໝົດໂຕ 1ໃບ ເພື່ອໃຫ້ເຫັນຄວາມເປັນພິການ )

11. ໃບປະຕິຍານຕົນ ( ຂຽນດ້ວຍຕົນເອງ ).

ທ່ານສາມາດມາພົວພັນເອົາເອກະສານຮັບສະໝັກດັ່ງກ່າວໄດ້ທີ່ ສະມາຄົມຄົນພິການແຫ່ງຊາດລາວ,ບ້ານໂພນສະຫວ່າງ,ເມືອງຈັນທະບູລີ ນະຄອນຫລວງວຽງຈັນ ຫລື ບັນດາສະມາຄົມຄົນພິການປະເພດຕ່າງໆໃນ ນະຄອນຫລວງວຽງຈັນ. ສຳລັບຕ່າງແຂວງທ່ານສາມາດພົວພັນເອົາເອະສານສະໝັກດັ່ງກ່າວທີ່ສະມາຄົມຄົນພິການຂັ້ນແຂວງ ຫລື ສາມາດດາວໂຫຼດຜ່ານທາງເວບໄຊ ຂອງສະມາຄົມຄົນພິການແຫ່ງຊາດລາວດັ່ງລຸ່ມນີ້: http://ldpa.org.la/?p=1176

( ສ່ວນລາຍລະອຽດຕ່າງໆນັ້ນເຮົາມີເອກະສານຊ້ອນທ້າຍ ).

ສະນັ້ນ.ຈິ່ງຂໍຖືເປັນກຽດແຈ້ງມາຍັງປະທານ ແລະ ຮອງປະທານ,ໜ່ວຍງານທີ່ກ່ຽວຂ້ອງເພື່ອຊາບ

ຮັກສາການປະທານສະມາຄົມຄົນພິການແຫ່ງຊາດລາວ

ສະມາຄົມຄົນພິການແຫ່ງຊາດລາວ

ນວນຕາ ລາດຊະວົງໄຊ


ຕິດຕໍ່:

ສະມາຄົມຄົນພິການແຫ່ງຊາດລາວ

ໂທ: 021 562 960,020 5575 1829